United Nations Development Programme

# PRESS RELEASE

Empowered lives.
Resilient nations.

# ສປປ ລາວ ສະເຫຼີມສະຫຼອງວັນມີຜົນບັງຄັບໃຊ້ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ຄົບຮອບ 9 ປີ

**ນະຄອນຫຼວງວຽງຈັນ, 26 ກໍລະກົດ 2019** – ວັນທີ 1 ສິງຫາ ຂອງທຸກປີ ເປັນວັນທີ່ມີຄວາມໝາຍສຳຄັນ ສຳລັບ ສປປ ລາວ ເຊິ່ງເປັນປະເທດທີ່ຖືກຖິ້ມລະເບີດໃສ່ຫຼາຍທີ່ສຸດໃນໂລກຕໍ່ຫົວຄົນ. ວັນດັ່ງກ່າວເປັນວັນລະນຶກເຖິງການຄົບຮອບຂອງວັນມີຜົນບັງຄັບໃຊ້ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ແລະ ໃນປີ 2019 ກໍເປັນການຄົບຮອບ 9 ປີ ຂອງສົນທິສັນຍາດັ່ງກ່າວ. ສົນທິສັນຍາດັ່ງກ່າວ ເປັນສົນທິສັນຍາສາກົນທີ່ຫ້າມການຜະລິດ, ການນຳໃຊ້, ການຂົນສົ່ງ ແລະ ການສະສົມອາວຸດລະເບີດເຫຼົ່ານີ້. ເພື່ອລະນຶກເຖິງການຄົບຮອບດັ່ງກ່າວ, ລັດຖະບານແຫ່ງ ສປປ ລາວ, ຄູ່ຮ່ວມພັດທະນາ ແລະ ໜ່ວຍງານຕ່າງໆໃນຂະແໜງການລະເບີດບໍ່ທັນແຕກ ໄດ້ມາເຕົ້າໂຮມກັນໃນພິທີນີ້ ເຊິ່ງຈັດຂຶ້ນໂດຍກະຊວງແຮງງານ ແລະ ສະຫວັດດີການສັງຄົມ.



ຊ່ຽວຊານໂຄງການເກັບກູ້ລະເບີດແຫ່ງຊາດ ກຳລັບໃຊ້ໂທລະໂຄ່ງ ເພື່ອເຕືອນປະຊາຊົນອ້ອມຂ້າງວ່າ ປະຕິບັດການທຳລາຍລະເບີດຈະເລີ່ມຂຶ້ນແລ້ວ. ຮູບພາບ: UNDP Lao PDR

ພິທີດັ່ງກ່າວບໍ່ພຽງແຕ່ເປັນການລະນຶກເຖິງການຄົບຮອບຂອງສົນທິສັນຍາດັ່ງກ່າວເທົ່ານັ້ນ, ແຕ່ຍັງເປັນການທວນຄືດເຖິງປະຫວັດສາດອັນເຈັບປວດຂອງ ສປປ ລາວ ຍ້ອນລະເບີດບໍ່ທັນແຕກ. ສປປ ລາວ ມີຄວາມກ້າວໜ້າຫຼາຍໃນວຽກງານແກ້ໄຂລະເບີດບໍ່ທັນແຕກ ເຊິ່ງປີກາຍນີ້ ຢູ່ ສປປ ລາວ ມີຈຳນວນຜູ້ເຄາະຮ້າຍທີ່ຖືກບາດເຈັບ ຫຼື ເສຍຊີວິດຈາກລະເບີດບໍ່ທັນແຕກ 24 ຄົນ (ຫຼຸດຈາກ300 ກວ່າຄົນ ໃນປີ 2008) ຈາກສົງຄາມທີ່ສິ້ນສຸດລົງຫຼາຍກວ່າ 40 ປີຜ່ານມາ. ນັກວິຊາການໄດ້ຄາດຄະເນວ່າ 30% ຂອງລະເບີດລູກຫວ່ານ ທັງໝົດ 270 ລ້ານໜ່ວຍທີ່ໄດ້ຖືກຖິ້ມລົງມາໃນຊ່ວງສົງຄາມອິນດູຈີນ ແມ່ນຍັງບໍ່ທັນແຕກ ຫຼື ປະມານ 80 ລ້ານໜ່ວຍ ແມ່ນຍັງບໍ່ທັນແຕກ ແລະ ຢັ່ງຢາຍຢູ່ຕາມພື້ນທີ່ຕ່າງໆຂອງ ສປປ ລາວ.

ສປປ ລາວ ເປັນປະເທດທີສອງທີ່ໄດ້ລົງນາມໃນສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ຫຼັງຈາກປະເທດ ນໍອກແວ ເຊິ່ງສົນທິສັນຍາດັ່ງກ່າວ ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງຕໍ່ ສປປ ລາວ ໂດຍສະເພາະແມ່ນ *ໂຄງການເກັບກູ້ລະເບີດແຫ່ງຊາດ*, ເຊິ່ງທີ່ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ໃນແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ຕະຫຼອດໄລຍະທີ່ຜ່ານມາ. ໂດຍລວມແລ້ວ ຕະຫຼອດ 20 ປີທີ່ຜ່ານມາ, ໂຄງການເກັບກູ້ລະເບີດແຫ່ງຊາດ ໄດ້ເກັບກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ໄດ້ຫຼາຍກວ່າ 375 km2 ເພື່ອເຮັດໃຫ້ດິນນຳໃຊ້ຢ່າງປອດໄພ, ທຳລາຍລະເບີດບໍ່ທັນແຕກຊະນິດຕ່າງໆໄດ້ຫຼາຍກວ່າ 1.6 ລ້ານໜ່ວຍ. ສິ່ງທີ່ປະຕິບັດໄດ້ໃນການເກັບກູ້ລະເບີດລະເບີດບໍ່ທັນແຕກດັ່ງກ່າວ ໄດ້ຮັບການຊົມເຊີຍຈາກບັນດາໜ່ວຍປະຕິບັດງານໃນຂະແໜງການລະເບີດບໍ່ທັນແຕກຕ່າງໆ ເຊັ່ນ ອົງການຊ່ວຍເຫຼືອລ້າຂອງປະຊາຊົນນອກແວ, ອົງການແມັດ, Halo Trust, ອົງການມະນຸດສະທຳ ແລະ ການມີສ່ວນຮ່ວມ ແລະ ທີມງານຊ່ວຍເຫຼືອມະນຸດສະທຳຂອງກອງທັບປະຊາຊົນລາວ.

ນອກຈາກນີ້, ໂຄງການເກັບກູ້ລະເບີດແຫ່ງຊາດ ຍັງໄດ້ດຳເນີນການໂຄສະນາສຶກສາຄວາມສ່ຽງກ່ຽວກັບລະເບີດບໍ່ທັນແຕກໃນບ້ານຕ່າງ 12,000 ຄັ້ງ ຢູ່ໃນ 9 ແຂວງທີ່ມີລະເບີດຕົກຄ້າງ ເຊິ່ງເຮັດໃຫ້ປະຊາຊົນໃນແຂວງເຫຼົ່ານັ້ນ ໄດ້ຮູ້ກ່ຽວກັບອັນຕະລາຍຈາກລະເບີດບໍ່ທັນແຕກຕົກຄ້າງ. ໂດຍສອດຄ່ອງກັບຈຸດປະສົງຂອງໂຄງການ, ສົນທິສັນຍາດັ່ງກ່າວ ຍັງໄດ້ສະໜອງຂອບການຮ່ວມມືໃຫ້ແກ່ ສປປ ລາວ ກັບບັນດາປະເທດຕ່າງໆ ແລະ ຄູ່ຮ່ວມງານອື່ນໆ ເພື່ອເຂົ້າໃຈຮ່ວມກັນແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງໃນປະເທດຂອງຕົນ ແລະ ໃນຫຼາຍປີຜ່ານມານີ້ ກໍມີຜົນໄດ້ຮັບທີ່ດີຈາກການຮ່ວມມືດັ່ງກ່າວນີ້. ນອກຈາກນັ້ນ, ສປປ ລາວ ຍັງໄດ້ປະກອບສ່ວນທີ່ສຳຄັນເຂົ້າໃນການລະດົມຂົນຂວາຍໃຫ້ປະເທດຕ່າງໆໃນໂລກ ລົງນາມ ແລະ ໃຫ້ສັດຕະຍາບັນຕໍ່ສົນທິສັນຍາດັ່ງກ່າວອີກດ້ວຍ.

ໃນພິທີ, ທ່ານ ປອ. ຄຳແພງ ໄຊສົມແພງ ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ກ່າວວ່າ “ ໃນປີ 2020 ນີ້, ລັດຖະບານ ສປປ ລາວ ຈະສຸມໃສ່ຄົ້ນຄວ້າສ້າງນິຕິກຳວ່າດ້ວຍການຈັດຕັ້ງລະເບີດລູກຫວ່ານ ໃຫ້ສຳເລັດໂດຍພື້ນຖານ ເພື່ອຈະເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ ວຽກງານກວດກູ້ລະເບີດບໍ່ທັນແຕກ ໃຫ້ມີປະສິດທິຜົນ, ຈະທົບທວນແຜນ ຍຸດທະສາດແຫ່ງຊາດ ເສັ້ນທາງກ້າວສູ່ຄວາມປອດ ໄພ II, 2011-2020; ທົບທວນແຜນການ 5 ປີ (2016-2020) ແລະ ສ້າງ ແຜນການ 5 ປີ (2021-2025).”

*ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂລະເບີດບໍ່ທັນແຕກ ທີ່ຕົກຄ້າງຢ ສປປ ລາວ* ຖືກມອບໝາຍໃນການເຮັດໜ້າທີ່ປະສານງານທົ່ວຂະແໜງການລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ເພື່ອ ຮັບປະກັນໃຫ້ ສປປ ລາວ ຈັດຕັ້ງປະຕິບັດຕາມພັນທະຂອງສົນທິສັນຍາຕ້ານລະເບີດລູກຫວ່ານ, ສ້າງນະໂຍບາຍ ແລະ ມາດຕະຖານແຫ່ງຊາດໃນການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ ອອກມາ ເພື່ອແນໃສ່ຮັບປະກັນຄຸນນະພາບຂອງການສຳຫຼວດ ແລະກວດກູ້ລະເບີດບໍ່ທັນແຕກໃຫ້ໄດ້ຜົນສູງສຸດ. *ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ* ໄດ້ມີບົດບາດສຳຄັນຫຼາຍໃນການຊີ້ນຳນຳພາການປະຕິບັດວິທີການສຳຫຼວດຊອກຫາ ລບຕ ຕົກຄ້າງ ແບບໃໝ່ ເຊິ່ງເຮັດໃຫ້ອັດຕາຄວາມສຳເລັດເພີ່ມຂຶ້ນເປັນ 4 ເທົ່າ. ພ້ອມດຽວກັນນີ້, ກໍ່ໄດ້ມີການຕິດຕາມກວດກາ ແລະ ຊີ້ນຳການຈັດຕັ້ງປະຕິບັດຂອງບັນດາອົງການປະຕິບັດຂອງຕ່າງປະເທດລວມທັງ *ໂຄງການເກັບກູ້ລະເບີດແຫ່ງຊາດ* ເປັນແຕ່ໄລຍະອີກດ້ວຍ.

ທ່ານນາງ ຣິຄາຣດາ ຣິເອເກີ, ຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ໄດ້ກ່າວວ່າ “ປະຊາຄົມສາກົນໄດ້ໃຫ້ການຍອມຮັບຢ່າງກວ້າງຂວາງຕໍ່ ສປປ ລາວ ແລະ ສະແດງຄວາມຂອບໃຈ ຕໍ່ ສປປ ລາວ ທີ່ໄດ້ເຮັດໃຫ້ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ເກີດຂຶ້ນມາ– *ຂໍຊົມເຊີຍລັດຖະບານລາວ ທີ່ເຮັດໃຫ້ວຽກນີ້ມີຄວາມສຳຄັນໃນລະດັບສາກົນ*. ຄວາມມຸ່ງໝັ້ນຂອງລັດຖະບານລາວ ໃນດຳເນີນງານຕ່າງ ເພື່ອຫ້າມການຜະລິດ, ການນຳໃຊ້, ການຂົນສົ່ງ ແລະ ການສະສົມ

ອາວຸດລະເບີດລູກຫວ່ານ ໄດ້ກາຍເປັນເຄື່ອງສຳຄັນຕໍ່ກັບຜົນສຳເລັດໃນການເຈລະຈາສ້າງຂໍ້ຜູກມັດທາງກົດໝາຍ ເຊິ່ງເອີ້ນວ່າ ສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ທີ່ຫຼາຍຄົນຮູ້ຈັກກັນດີ. ພວກເຮົາຮູ້ສຶກເປັນກຽດທີ່ໄດ້ເປັນຄູ່ຮ່ວມພັດທະນາທີ່ໄວ້ເນື້ອເຊື່ອໃຈຂອງ ສປປ ລາວ ແລະ ໄດ້ເປັນສ່ວນໜຶ່ງໃນການຮ່ວມມືກັບລັດຖະບານລາວ, ບັນດາປະເທດຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອເຮັດໃຫ້ເປົ້າໝາຍເຫຼົ່ານີ້ບັນລຸຜົນຕາມຄາດໝາຍທີ່ວາງໄວ້ໃນການແກ້ໄຂບັນຫາລະເບີດບໍ່ທັນແຕກ ແລະ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ອັນດັບທີ 18.”

ຮັບຊົມການເຮັດວຽກຂອງທີມງານເກັບກູ້ລະເບີດບໍ່ທັນແຕກໃນພາກສະໜາມ ຈາກຮູບເງົາ 360 ອົງສາ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ *The bombs below*.